ໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ)

---

# ຂໍ້ແນະນຳການຄັດເລືອກ ແລະ ຂັ້ນຕອນການປະຕິບັດຊາວກະສິກອນຕົວແບບ ແລະ ຊາວກະສິກອນຕົວແບບທີ່ເປັນໄວໜຸ່ມ

ພຶດສະພາ 2023

# ພາກສະເໜີ

ຄູ່ມືສະບັບນີ້ມີລາຍລະອຽດຂອງຂັ້ນຕອນສຳລັບການກະກຽມ, ອະນຸມັດ ແລະ ຈັດຕັ້ງປະຕິບັດການສະໜັບສະໜູນຄສິກອນຕົວແບບ ແລະ ຊາວໜຸ່ມຕົວແບບ ຂອງໂຄງການ ຊກຂ. ເປັນຄູ່ມືທີ່ພັດທະນາມາຈາກຄູ່ມືການລົງທຶນກຸ່ມຜະລິດຊາວກະສິກອນຂອງໂຄງການ ຊກຂ, ທີ່ສະໜັບສະໜູນໂດຍອົງການກອງທຶນສາກົນເພື່ອການພັດທະນາກະສິກຳ (IFAD) ໂດຍສະເພາະແມ່ນການສະໜັບສະໜູນຊາວກະສິກອນຕົວແບບ ແລະ ຊາວໜຸ່ມຕົວແບບ ໃຫ້ໄດ້ 2 ຕົວແບບ/ບ້ານ( 1 ຊາວກະສິກອນຕົວແບບ ແລະ 1 ຊາວໜຸ່ມຕົວແບບ), ເພື່ອຜັນຂະຫຍາຍຫົວໜ່ວຍການຜະລິດໂດຍການນຳໃຊ້ເທັກໂນໂລຊີທີ່ແທດເໝາະ ແລະ ໄດ້ຮັບຜົນສຳເລັດມາແລ້ວ ເພື່ອນຳໄປດຳເນີນການສາທິດ ແລະ ແລກປ່ຽນບົດຮຽນ, ຄວາມຮູ້ກັບກຸ່ມອື່ນໆທີ່ກ່ຽວຂ້ອງ, ວິທີການນຳໃຊ້ໃນໂຄງການຊົນລະກະເສດແມ່ນໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າ (ຊກຂ) ຂັ້ນສູນກາງ, ທີມງານຈັດຕັງປະຕິບັດຂັ້ນແຂວງ ແລະ ຂັ້ນເມືອງ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ໃຫ້ບັນລຸຕາມແຜນທີ່ກຳນົດໄວ້.

ຄູ່ມືການສ້າງຊາວກະສິກອນຕົວແບບ ແລະ ຊາວໜຸ່ມຕົວແບບ ແມ່ນອອກແບບເພື່ອຮັບໃຊ້ສະເພາະໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ(ຊກຂ) ໃນຫ້ອງການປະສານງານສູນກາງ, ທີມງານຈັດຕັ້ງປະຕິບັດຂັ້ນແຂວງ, ທີມງານສະໜັບສະຫນູນການຈັດຕັ້ງປະຕິບັດຂັ້ນເມືອງ ເທົ່ານັ້ນ. ຄູ່ມືດັ່ງກ່າວສະໜອງລາຍລະອຽດໃນການກຳນົດກິດຈະກຳການການສະໜັບສະໜູນຊາວກະສິກອນຕົວແບບ ແລະ ຊາວໜຸ່ມຕົວແບບ, ມາດຖານເງື່ອນໄຂການຄັດເລືອກ, ຂັ້ນຕອນການຄັດເລືອກ, ການເງິນ, ການຈັດຊື້ສຳລັບຕົວແບບ ແລະ ຂະບວນການຕິດຕາມ ແລະ ປະເມີນຜົນ. ແຕ່ລະລາຍລະອຽດແມ່ນຢູ່ເອກະສານຂ້າງລຸ່ມນີ້.

## ສາລະບານ

I. ຈຸດປະສົງ: ........................................................................................................ 3
II. ມາດຖານ ເງື່ອນໄຂການຄັດເລືອກ ............................................................................... 3
III. ການຄັດເລືອກຈຳນວນຕົວແບບຕໍ່ບ້ານ: ....................................................................... 3
IV. ຂະໜາດທຶນສຳລັບຕົວແບບ ...................................................................................... 3
V. ໄລຍະເວລາໃນການປະຕິບັດ ........................................................................................ 3
VI. ກິດຈະກຳການລົງທຶນສຳລັບຊາວກະສິກອນຕົວແບບ.......................................................... 3
VII. ລາຍການທີ່ບໍ່ສະໜັບສະໜູນ........................................................................................ 4
VIII. ຂັ້ນຕອນການຄັດເລືອກ .......................................................................................... 4
1. ຈັດກອງປະຊຸມຂັ້ນບ້ານ ............................................................................................. 4
2. ປະເມີນສະມາຊິກກຸ່ມຜະລິດ......................................................................................... 4
2. ການຈັດກອງປະຊຸມບ້ານເພື່ອຄັດເລືອກ ........................................................................... 5
IX. ການອະນຸມັດ ແລະ ໃບຢັ້ງຢືນຕົວແບບ............................................................................ 5
1. ການຝຶກອົບຮົມ ........................................................................................................ 5
2. ດຳເນີນການຂຽນ. ...................................................................................................... 5
XI. ການຂໍອະນຸມັດທຶນແກ່ ຊາວກະສິກອນຕົວແບບ ແລະ ຊາວໜຸ່ມຕົວແບບ. ................................. 5
- ເອກສານທີ່ປະກອບເພື່ອຍື່ນສະເໜີຂໍອະນຸມັດທຶນ................................................................ 5
- ຂັ້ນຕອນການຍື່ນສະເໜີເພື່ອຂໍອະນຸມັດ ........................................................................... 6
XII. ການເຊັນສັນຍາສະໜອງທຶນ........................................................................................ 6
XIII. ການເບີກຈ່າຍ ........................................................................................................ 6
1. ເອກະສານສະເໜີຂໍໂອນທຶນ ....................................................................................... 6
2. ການເບີກຈ່າຍທຶນສຳລັບຊາວກະສິກອນຕົວແບບ ແລະ ຊາວໜຸ່ມຕົວແບບ .................................. 7
3. ການບໍລິຫານການເງິນ.................................................................................................. 7
XIV. ການສະໜັບສະໜູນທາງດ້ານເຕັກນິກ ........................................................................... 7
XV. ການຈັດຕັ້ງປະຕິບັດ.................................................................................................. 7
1. ການຈັດຊື້ ............................................................................................................... 7
2. ການຈັດຕັ້ງປະຕິບັດ.................................................................................................... 7
XVI. ການຕິດຕາມ ແລະ ປະເມີນຜົນ ................................................................................. 7
ເອກະສານຊ້ອນທ້າຍ...................................................................................................... 9

**I. ຈຸດປະສົງ:**

- ເພື່ອສະໜັບສະໜູນຊາວກະສິກອນຕົວແບບ ແລະ ຊາວໜຸ່ມຕົວ, ຜັນຂະຫຍາຍຫົວໜ່ວຍການຜະລິດໂດຍການນຳໃຊ້ເທັກໂນໂລຊີທີ່ແທດເໝາະ ແລະ ໄດ້ຮັບຜົນສຳເລັດມາແລ້ວ ເພື່ອນຳໄປດຳເນີນການສາທິດ ແລະ ແລກປ່ຽນບົດຮຽນ, ຄວາມຮູ້ກັບກຸ່ມອື່ນໆທີ່ກ່ຽວຂ້ອງ.

**II. ມາດຖານ-ເງື່ອນໄຂການຄັດເລືອກຄອບຄົວຕົວແບບ**

1) ເປັນຄົວເຮືອນຊາວໜຸ່ມ ທີ່ມີອາຍຸ 15-35 ປີ ທີ່ມີທີ່ຢູ່ຖາວອນໃນບ້ານເປົ້າໝາຍ ແລະ ມີຄວາມປາດຖະໜາ ສ້າງ ແລະ ປັບປຸງຊີວິດການເປັນຢູ່ທີ່ຍຶດອາຊີບເປັນຊາວກະສິກອນໃນບ້ານ.
2) ເປັນຜູ້ທີ່ມີຄຸນສົມບັດດີເປັນແບບຢ່າງຮອບດ້ານ ແລະ ຄົວເຮືອນມີຄວາມສະຫງົບສຸກ.
3) ເປັນຜູ້ທີ່ມີຄວາມສາມັກຄີ ແລະ ສາມາດເຕົ້າໂຮມຄວາມສາມັກຄີພາຍໃນກຸ່ມໄດ້ດີ.
4) ເປັນເພດຍິງ ແມ່ນສະໜັບສະໜູນເປັນບຸລິມະສິດ
5) ມີຄວາມສຳເລັດໃນການປະຕິບັດກິດຈະກຳ ແລະ ມີລາຍຮັບຈາກການຜະລິດຫລາຍກວ່າ 5.6-7.2 ລ້ານກີບ/ປີ ຂຶ້ນໄປ.
6) ເປັນຜູ້ທີ່ມີຄວາມຮູ້, ຄວາມສາມາດທາງດ້ານເຕັກນິກກະສິກຳທີ່ແໜ້ນໜາ ສາມາດຖ່າຍທອດ, ແນະນຳ ແລະ ສິດສອນໃຫ້ແກ່ກຸ່ມຊາວກະສິກອນຂອງໂຄງການ.

**ໝາຍເຫດ: ຄົວເຮືອນທີ່ຄັດເລືອກເປັນຊາວກະສິກອນຕົວແບບ ແລະ ຊາວກະສິກອນໄວໜຸ່ມຕົວແບບຕ້ອງຜ່ານ 3 ມາດຖານ-ເງື່ອນໄຂ ຂຶ້ນໄປ.**

**III. ການຄັດເລືອກຈຳນວນຕົວແບບຕໍ່ບ້ານ:**

ການສະໜອງທຶນສາມາດສະໜອງທຶນໃຫ້ແກ່ ຊາວກະຊິກອນຕົວແບບ 1 ຄົນ ແລະ ຊາວກະສິກອນໜຸ່ມ 1 ຄົນ, ລວມເປັນ 2 ຄົນ/ບ້ານ.

**IV. ຂະໜາດທຶນສຳລັບຕົວແບບ:** ຂະໜາດຂອງທຶນແມ່ນສູງສຸດເຖິງ 2,000 ໂດລາ/ຕົວແບບ

**V. ໄລຍະເວລາໃນການປະຕິບັດ:** ໄລຍະເວລາໃນການຈັດຕັ້ງປະຕິບັດແມ່ນ ສູງສຸດ 6 ເດືອນ, ຫລັງຈາກທີ່ໄດ້ຮັບການຝຶກອົບຮົມ.

**VI. ກິດຈະກຳການລົງທຶນສຳລັບຊາວກະສິກອນຕົວແບບ:** ຈະກວມເອົາທຸກຢ່າງທີ່ຈະຈັດຊື້ເພື່ອການລົງທຶນໃນກິດຈະກຳ ແລະ ລວມທັງການບໍລິການເຊັ່ນ:

- ຈັດຊື້ວັດສະດຸ ແລະ ການບໍລິການສຳລັບການສ້າງຫົວໜ່ວຍການຜະລິດ (ຄອກສັດ, ສາງເກັບມ້ຽນຜົນຜະລິດ ຫຼື ສິ່ງປຸກສ້າງອື່ນໆ, ໜອງປາ, ເຮືອນຮົ່ມ ແລະ ອື່ນໆ);
- ແນວພັດສັດລ້ຽງນ້ອຍ ຄຽງຄູ່ກັບການຜະລິດອາຫານສັດ, ຫົວອາຫານ ແລະ ຢາວັກຊີນປ້ອງກັນພະຍາດສັດ;
- ແນວພັດປັບປຸງ ແລະ ເບ້ຍໄມ້;
- ຫົວອາຫານ ແລະ ປຸ໋ຍອໍການິກ ( ສູງສຸດສະໜອງໃຫ້ບໍ່ເກີນ ໄລຍະ 6 ເດືອນ);
- ເຄື່ອງມື-ອຸປະກອນ;
- ວັດສະດຸເພື່ອການສະໜອງ ແລະ ແຈກຢາຍນ້ຳເຂົ້າໃນການຜະລິດ;
- ເຄື່ອງຈັດຂະໜາດນ້ອຍ ແລະ ເຄື່ອງຈັກການກະເສດຂະໜາດນ້ອຍ;

**VII. ລາຍການທີ່ບໍ່ສະໜັບສະໜູນ.**

- ສັດໃຫ່ຍ (ງົວ ແລະ ຄວາຍ);
- ສານເຄມີກຳຈັດສັດຕູພືດ
- ສານກະຕຸ້ນການລ້ຽງສັດ ແລະ ການປູກພືດ ທີ່ມີຜົນກະທົບຕໍ່ສິ່ງທີ່ມີຊີວິດ.
- ເຄື່ອງກົນຈັກໃຫ່ຍທີ່ຕ້ອງການທັກສະ ແລະ ການປົກປັກຮັກສາສະເພາະ;
- ແຮງງານ ແລະ ວັດສະດຸທ້ອງທີ່ແມ່ນຊາວກະສິກອນຕົວແບບເປັນຜູ້ສະໜອງ-ປະກອບສ່ວນ.

**VIII. ຂັ້ນຕອນການຄັດເລືອກ**

**1. ຈັດກອງປະຊຸມຂັ້ນບ້ານ** ໂດຍມີຜູ້ເຂົ້າຮ່ວມໝົດບ້ານ ຜູ້ທີ່ມີອາຍຸ 15 ປີຂຶ້ນໄປ ໃນນັ້ນໃຫ້ມີຜູ້ຍິງເຂົ້າຮ່ວມໝົດທຸກຄົນພາຍໃນບ້ານ.

- ເຕົ້າລວມຊຸມຊົນພາຍໃນບ້ານ ລວມທັງ ສະມາຊິກກຸ່ມຜະລິດທັງໝົດ
- ພະນັກງານສົ່ງເສີມ ຫລື ຕາງໜ້າທີມງານຈັດຕັ້ງປະຕິບັດຂັ້ນເມືອງສະເໜີຈຸດປະສົງ ແລະ ນະໂຍບາຍການສະໜັບສະໜູນຊາວກະສິກອນຕົວແບບ ແລະ ຊາວໜຸ່ມຕົວແບບ ແລະ ເງື່ອນໄຂການຄັດເລືອກຕ່າງໆ
- ສົນທະນາ(ມີການຖາມຕອບຂໍ້ຂ້ອງໃຈ)

**2. ການປະເມີນສະມາຊິກກຸ່ມຜະລິດຕາມ ຕາມມາດຖານ-ເງື່ອນໄຂຕົວແບບ.**

- ສຳລັບຜູ້ເຂົ້າຮ່ວມໃນການປະເມີນປະກອບມີ: (1) ທີມງານຂັ້ນເມືອງ;(2) ຄະນະກຸ່ມ ແລະ (3) ອຳນາດການປົກຄອງບ້ານ 1-2 ທ່ານ. ໂດຍປະຕິບັດຕາມຂັ້ນຕອນຄື:
- ລົງປະເມີນການຈັດຕັ້ງປະຕິບັດຂອງສະມາຊິກແຕ່ລະຄອບຄົວ ຕາມມາດຖານ-ເງື່ອນໄຂຕົວແບບ.

  ***ວິທີການປະເມີນ***

  ການຄັດເລືອກຄົວເຮືອນຊາວກະສິກອນຕົວແບບ ແລະ ຊາວກະສິກອນໄວໜຸ່ມຕົວແບບ ໂດຍການຄົ້ນຄວ້າພິຈາລະນາຕາມມາດ ຖານ-ເງື່ອນໄຂ ທີ່ມີຄວາມເໝາະສົມ, ຄົວເຮືອນດັ່ງກ່າວຖືກຕ້ອງຕາມມາດຖານ-ເງື່ອນໄຂ ແມ່ນໃຫ້ຄະແນນດ້ວຍການໝາຍຕິກ(√)ໃສ່ຫ້ອງ(ຜ່ານ), ແຕ່ຖ້າບໍ່ຖືກກັບມາດຖານ-ເງື່ອນໄຂແມ່ນໃຫ້ຄະແນນໝາຍຕິກ(√) ໃສ່ຫ້ງ(ບໍ່ຜ່ານ).

| ລດ | ເງື່ອນໄຂ | ຜ່ານ | ບໍ່ຜ່ານ |
|---|---|---|---|
| 1 | ເປັນຄົວເຮືອນຊາວໜຸ່ມ ທີ່ມີອາຍຸ 15-35 ປີ ທີ່ມີທີ່ຢູ່ຖາວອນໃນບ້ານເປົ້າໝາຍ ແລະ ມີຄວາມປາດຖະໜາ ສ້າງ ແລະ ປັງປຸງຊີວິດການເປັນຢູ່ທີ່ຍຶດອາຊີບເປັນຊາວກະສິກອນໃນບ້ານ. | | |
| 2 | ເປັນຜູ້ທີ່ມີຄຸນສົມບັດດີເປັນແບບຢ່າງຮອບດ້ານ ແລະ ຄົວເຮືອນມີຄວາມສະຫງົບສຸກ. | | |
| 3 | ເປັນຜູ້ທີ່ມີຄວາມສາມັກຄີ ແລະ ສາມາດເຕົ້າໂຮມຄວາມສາມັກຄີພາຍໃນກຸ່ມໄດ້ດີ. | | |
| 4 | ເປັນເພດຍິງ ແມ່ນສະໜັບສະໜູນເປັນບຸລິມະສິດ | | |
| 5 | ມີຄວາມສຳເລັດໃນການປະຕິບັດກິດຈະກຳ ແລະ ມີລາຍຮັບຈາກການຜະລິດຫລາຍກວ່າ 5.6-7.2 ລ້ານກີບ/ປີຂຶ້ນໄປ. | | |
| 6 | ເປັນຜູ້ທີ່ມີຄວາມຮູ້, ຄວາມສາມາດທາງດ້ານເຕັກນິກກະສິກຳທີ່ແໜ້ນໜາ ສາມາດຖ່າຍທອດ, ແນະນຳ ແລະ ສິດສອນໃຫ້ແກ່ກຸ່ມຊາວກະສິກອນຂອງໂຄງການ. | | |
| | **ຄະແນນລວມ** | | |

-

**ໝາຍເຫດ:** ຄົວເຮືອນທີ່ຄັດເລືອກເປັນຊາວກະສິກອນຕົວແບບ ແລະ ຊາວກະສິກອນໄວໜຸ່ມຕົວແບບຕ້ອງຜ່ານ 3

ມາດຖານ-ເງື່ອນໄຂ ຂຶ້ນໄປ.

- ສັງລວມການປະເມີນ.
- ປະຊຸມໃນທີມງານປະເມີນເພື່ອສະຫລຸບການປະເມີນ.
- ເຮັດບົດລາຍງານການປະເມີນ.

**2. ການຈັດກອງປະຊຸມບ້ານເພື່ອຄັດເລືອກ:**

- ໂດຍມີຜູ້ເຂົ້າຮ່ວມໝົດບ້ານຜູ້ທີ່ມີອາຍຸ 15 ປີຂຶ້ນໄປໃນນັ້ນໃຫ້ມີຜູ້ຍິງຊຸກຍູ້ໃຫ້ເຂົ້າຮ່ວມເປັນບຸລິມະ ສິດ.
- ສະເໜີຈຸດປະສົງ
- ລາຍງານຜົນການປະເມີນ
- ສະເໜີຄອບຄົວທີ່ມີຄະແນນສູງ ແລະ ເປັນຊາວກະສິກອນຕົວແບບ ແລະ ຊາວໜຸ່ມຕົວແບບ.
- ຜູ້ເຂົ້າຮ່ວມມີຄຳເຫັນ ຫລື ສົນທະນາຖາມຕອບຂໍ້ຂ້ອງໃຈ
- ຮັບຮອງຂັ້ນບ້ານ ແລະ ເຮັດໃບສະເໜີຂໍສ້າງຕັງຊາວກະສິກອນຕົວແບບ ແລະ ຊາວໜຸ່ມຕົວແບບ.

**IX. ການອະນຸມັດ ແລະ ໃບຢັ້ງຢືນຕົວແບບ**

- ກຸ່ມຜະລິດເຮັດໃບສະເໜີສ້າງກະສິກອນຕົວແບບ ແລະ ຊາວໜຸ່ມຕົວແບບ ສະເໜີ ຫາຫ້ອງການກະສິກຳ ແລະ ປ່າໄມ້ເມືອງ
- ຫ້ອງການກະສິກຳ ແລະ ປ່າໄມ້ເມືອງເຮັດໃບສະເໜີຫາທ່ານເຈົ້າເມືອງເພື່ອອອກຂໍຕົກລົງສ້າງຕັ້ງຕົວແບບ
- ທ່ານເຈົ້າເມືອງອອກຂໍ້ຕົກລົງ ແລະ ໃບຢັ້ງຢືນກະສິກອນຕົວແບບ ແລະ ຊາວໜຸ່ມຕົວແບບ.

**X. ການກະກຽມແຜນທຸລະກິດ.**

1. **ການຝຶກອົບຮົມ**: ກ່ຽວກັບການກະກຽມແຜນທຸລະກິດໃຫ້ແກ່ຊາວກະສິກອນຕົວແບບ ແລະ ຊາວໜຸ່ມຕົວແບບ.

**2. ດຳເນີນການຂຽນ.**

- ການຄັດເລືອກກິດຈະກຳສຳລັບຊາວກະສິກອນຕົວແບບ ແລະ ຊາວໜຸ່ມຕົວແບບ.
- ເກັບກຳຂໍ້ມູນ
- ກຳນົດປັດໃຈການຜະລິດທີ່ມີຄວາມຈຳເປັນ
- ລົງສຳຫລວດພື້ນທີ່ການຜະລິດ
- ການວິເຄາະຜົນໄດ້ຮັບຈາກການຜະລິດ
- ດຳເນີນການຂຽນແຜນທຸລະກິດໂດຍ ຊາວກະສິກອນຕົວແບບ ແລະ ຊາວໜຸ່ມຕົວແບບ.

**XI. ການຂໍອະນຸມັດທຶນແກ່ ຊາວກະສິກອນຕົວແບບ ແລະ ຊາວໜຸ່ມຕົວແບບ.**

**- ເອກະສານທີ່ປະກອບເພື່ອຍື່ນສະເໜີຂໍອະນຸມັດທຶນ**

1. ແຜນທຸລະກິດ
2. ໃບສະເໜີ ຫາຫ້ອງການປະສານງານຂັ້ນເມືອງ
3. ໂຄງການຂັ້ນເມືອງ ຫາ ໂຄງການຂັ້ນແຂວງ
4. ໂຄງການຂັ້ນແຂວງ ຫາໂຄງການຂັ້ນສູນກາງ

- **ຂັ້ນຕອນການຍື່ນສະເໜີເພື່ອຂໍອະນຸມັດ**

ລະດັບ 6: ການກວດສອບພາຍໃນ — ທີມງານຊີ້ນໍາຂັ້ນສູນກາງອີງຕາມຊີ້ແຈງໂດຍຫົວໜ້າທີ່ປືກສາ

ລະດັບ 5: M&E / ການເງິນ / ຈັດຊື້ — ທີມງານການເງິນ, ທີມງານຕິດຕາມປະເມີນຜົນ

ລະດັບ 4: ຄວບຄຸມຄຸນະພາບຄັ້ງທີ 2 — NFGIA/AIF / ຈິ່ງລໍ / CTA

ຄວບຄຸມຄຸນະພາບຄັ້ງທີ 3 — NFGIA, AIF ແລະ FGIA

ລະດັບ 2: ການອອກແບບບົດສະເໜີ — ພຽສິ່ງເສີມ, FGIA ແລະ ຜູ້ຊ່ວຍທຸລະກິດຂັ້ນແຂວງ

ຂັ້ນ 1: ຊາວກະສິກອນຕົວແບບ/ຊາວໜຸ່ມຕົວແບບ, ພຽສິ່ງສີມ, ຜູ້ຊ່ວຍທຸລະກິດ ແລະ FGIA

**XII. ການເຊັນສັນຍາສະໜອງທຶນ ລະຫວ່າງຊາວກະສິກອນຕົວແບບ ແລະ ຊາວໜຸ່ມຕົວແບບ ກັບ ຄະນະພັດທະນາເສດຖະກິດ-ສັງຄົມເມືອງ**

1. ກະກຽມຮ່າງສັນຍາພາສາລາວ ແລະ ພາສາອັງກິດ 2-3 ຊຸດ/ກຸ່ມ
2. ຊາວກະສິກກອນຕົວແບບ ແລະ ຊາວໜຸ່ມຕົວແບບສຶກສາກ່ຽວກັບສັນຍາ, ເງື່ອນໄຂສັນຍາ ແລະ ລວມທັງວິທີການປະຕິບັດ.
3. ການຈັດພິທີເຊັນສັນຍາ ຊາວກະສິກກອນຕົວແບບ ແລະ ຊາວໜຸ່ມຕົວແບບ ກັບ ຄະນະພັດທະນາເສດຖະກິດ-ສັງຄົມເມືອງ ໂດຍມີ ຜູ້ເຂົ້າຮ່ວມເຊັ່ນ: (1) ນາຍບ້ານ 1 ທ່ານ; (2) ຊາວກະສິກກອນຕົວແບບ ຫລື ຊາວໜຸ່ມຕົວແບບ; (3) ຫົວໜ້າກຸ່ມ ແລະ ຄະນະກຸ່ມ 2 ທ່ານ, ຍິງ 1 ທ່ານ, (3) ທ່ານ ຮອງເຈົ້າເມືອງຜູ້ຊີ້ນໍາໂຄງການ; (4) ຫ້ອງການອ້ອມຂ້າງຂັ້ນເມືອງ; (5) ທີມງານຂັ້ນເມືອງ ແລະ ໂຄງການຂັ້ນແຂວງ 2-3 ທ່ານ.

**XIII. ການເບີກຈ່າຍ**

**1. ເອກະສານສະເໜີຂໍໂອນທຶນ**

- ສັນຍາລະຫວ່າງຊາວກະສິກອນຕົວແບບ/ຊາວໜຸ່ມຕົວແບບ ແລະ ຄະນະພັດທະນາເສດຖະກິດ ສັງຄົມເມືອງ(ພາສາລາວ ແລະ ພາສາອັງກິດ).
- ໃບສະເໜີຂໍໂອນທຶນຈາກກຸ່ມຫາເມືອງ
- ໃບສະເໜີໂຄງການຂັ້ນເມືອງ ຫາ ຂັ້ນແຂວງ
- ໃບສະເໜີໂຄງການຂັ້ນແຂວງ ຫາ ສູນກາງ

2. **ການເບີກຈ່າຍທຶນສໍາລັບຊາວກະສິກອນຕົວແບບ ແລະ ຊາວໜຸ່ມຕົວແບບ** ແມ່ນໂຄງການ ຊກຂ ຂັ້ນສູນກາງຈະໂອນເຂົ້າບັນຊີຂອງກຸ່ມຜະລິດ.

3. ການບໍລິຫານການເງິນ:

- ກຸ່ມຜະລິດຈະເປັນຜູ້ບໍລິຫານການເງິນສໍາລັບຊາວກະສິກອນຕົວແບບ ແລະ ຊາວໜຸ່ມຕົວແບບ.
- ການໃຊ້ຈ່າຍທຶນໃນການຊື້ປັດໃຈການຜະລິດຕ້ອງມີການເກັບກໍາຫລັກຖານໃນການໃຊ້ຈ່າຍເຊັ່ນ: ໃບບິນ, ຫລັກຖານການໂອນ ແລະ ອື່ນໆ ເພື່ອສະຫລຸບລາຍງານ.
- ທຸກໆຄັ້ງທີ່ມີການໃຊ້ຈ່າຍທຶນ ຊາວກະສິກອນຕົວແບບ ແລະ ຊາວໜຸ່ມຕົວແບບ ຕ້ອງສະຫລຸບ ແລະ ລາຍງານແກ່ຫົວ ແລະ ຄະນະກຸ່ມເພື່ອລາຍງານໃຫ້ພາກສ່ວນທີ່ກ່ຽວຂ້ອງ.

## XIV. ການສະໜັບສະໜູນທາງດ້ານເຕັກນິກ

ໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ( ຊກຂ) ສະໜັບສະໜູນທາງດ້ານເຕັກນິກໃຫ້ແກ່ຊາວກະສິກອນຕົວແບບ ແລະ ຊາວໜຸ່ມຕົວແບບ ໃນການຈັດຕັ້ງປະຕິບັດເຊັ່ນ:

- ການຝຶກອົບຮົມການຂຽນແຜນທຸລະກິດແບບຍືນຍົງ.
- ອົບຮົມເຕັກນິກການປູກປູກ, ການລ້ຽງ, ການປຸງແຕ່ງຜົນຜະລິດເບື້ອງຕົ້ນ ແລະ ອື່ນໆ.
- ການຕິດຕາມຊ່ວຍເຫລືອເປັນປະຈໍາ.
- ການຕະຫລາດ
- ການບໍລິຫານການເງິນ ແລະ ການຈັດຊື້

## XV. ການຈັດຕັ້ງປະຕິບັດ

### 1. ການຈັດຊື້

- ການຈັດຊື້ປັດໃຈການຜະລິດ, ອຸປະກອນ ແລະ ເຄື່ອງມືໂດຍກຸ່ມຜະລິດ.
- ກຸ່ມຜະລິດວາງແຜນການຈັດຊື້
- ດໍາເນີນການຈັດຊື້ໂດຍປະຕິບັດຕາມລະບຽບການຈັດຊື້ ຢ່າງເຂັ້ມງວດ.
- ເຮັດສັນຍາສະໜອງສິນຄ້າ ລະຫວ່າງກຸ່ມຜະລິດ ແລະ ຜູ້ສະໜອງ.
- ການຈັດສົ່ງປັດໃຈການຜະລິດ, ອຸປະກອນ, ວັດສະດຸກໍ່ສ້າງ ແລະ ເຄື່ອງມືຕ່າງໆ.
- ກວດກາຄຸນນະພາບປັດໃຈການຜະລິດ, ອຸປະກອນ, ວັດສະດຸກໍ່ສ້າງ ແລະ ເຄື່ອງມືຕ່າງໆ ໃຫ້ຖືກຕ້ອງຕາມສັນຍາ.
- ການນໍາໃຊ້ທຶນແຕ່ລະຄັ້ງຊາວກະສິກອນຕົວແບບ ແລະ ຊາວໜຸ່ມຕົວແບບ ຈະຂຶ້ນແຜນການນໍາໃຊ້ທຶນສະເໜີຫາຄະກຸ່ມ ເພື່ອຖອນທຶນໃຫ້ຕາມແຜນການນໍາໃຊ້ ໂດຍອີງໃສ່ແຜນທຸລະກິດ.
- ການມອບຮັບປັດໃຈການຜະລິດ, ເຄື່ອງມື ແລະ ວັດຖຸອຸປະກອນສໍາລັບການກໍ່ສ້າງ ແລະ ສ້ອມແປງໂຄງລ່າງພື້ນຖານຂະໜາດນ້ອຍ.

### 2. ການຈັດຕັ້ງປະຕິບັດ

- ວາງແຜນການຈັດຕັ້ງປະຕິບັດໂດຍຊາວກະສິກອນຕົວແບບ ແລະ ຊາວໜຸ່ມຕົວແບບເປັນເຈົ້າການໃນການຈັດ ຕັ້ງປະຕິບັດ, ສ່ວນທີມງານຈັດຕັ້ງປະຕິບັດຂັ້ນເມືອງເປັນຜູ້ສະໜັບສະໜູນທາງດ້ານເຕັກວິຊາການ ໂດຍການສ້າງຄວາມເຂັ້ມແຂງໃຫ້ແກ່ຊາວກະສິກອນຕົວແບບ ແລະ ຊາວໜຸ່ມຕົວແບບ.
- ການກະກຽມການປະກອບສ່ວນ
- ດໍາເນີນການຈັດຕັ້ງປະຕິບັດຕາມແຜນທຸລະກິດຊາວກະສິກອນຕົວແບບ ແລະ ຊາວໜຸ່ມຕົວແບບ.
- ຖ່າຍຖອດບົດຮຽນລະຫວ່າງຊາວກະສິກອນຕົວແບບ ແລະ ຊາວໜຸ່ມຕົວແບບ ແລະ ສະມາຊິກກຸ່ມ.

## XVI. ການຕິດຕາມ ແລະ ປະເມີນຜົນ

- ຕິດຕາມການຈັດຕັ້ງປະຕິບັດ ແລະ ໃຫ້ຄໍາແນະນໍາທາງດ້ານເຕັກນິກ.
- ຕິດຕາມການເກັບກ່ຽວຜົນຜະລິດ ລວມທັງລາຍຮັບຂອງສະມາຊິກ.
- ຂຽນບົດລາຍງານຄວາມຄືບໜ້າປະຈໍາເດືອນ.
- ປະເມີນຜົນໄດ້ຮັບສຸດທ້າຍ.
- ຂຽນບົດລາຍງານສໍາເລັດການປະຕິບັດຕົວແບບ

**ເອກະສານຊ້ອນທ້າຍ**

1. ແບບຟອມແຜນທຸລະກິດ
2. ແບບຟອມບົດບັນທຶກກອງປະຊຸມ
3. ແບບຟອມການເກັບກຳຂໍ້ມູນ ແລະ ປະເມີນສະມາຊິກກຸ່ມຜະລິດ
4. ແບບຟອມບົດລາຍງານການປະເມີນສະມະຊິກ
5. ແບບຟອມໃບຄຳຮ້ອງຂອງກຸ່ມເພື່ອສ້າງຕົວແບບ
6. ແບບຟອມໃບສະເໜີຫາ ທ່ານເຈົ້າເມືອງ ເພື່ອອອກໃບຢັ້ງຢືນຕົວແບບ
7. ແບບຟອມຂໍ້ຕົກລົງຂອງທ່ານເຈົ້າເມືອງ
8. ແບບຟອມໃບຢັ້ງຢືນຊາວກະສິກອນຕົວແບບ/ຊາວໜຸ່ມຕົວແບບ ທີ່ອະນຸມັດໂດຍທ່ານເຈົ້າເມືອງ

ແບບຟອມທີ 1: ແຜນທຸລະກິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-------0000-------

ແຂວງ .......................
ເມືອງ ........................
ໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ ເລກທີ:......./ຊກຂ

# ໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ

# ແຜນທຸລະກິດ ສຳລັບ ກະສິກອນຕົວແບບ

| | |
|---|---|
| ຊື່ໂຄງການຂໍທຶນ: | |
| ທີ່ຕັ້ງຂອງໂຄງການ: | |
| ຊື່ກະສິກອນຕົວແບບ: | |
| ໄລຍະເວລາຈັດຕັ້ງປະຕິບັດ: | |
| ມູນຄ່າການຂໍທຶນຈາກໂຄງການ ຊກຂ: | |
| ມູນຄ່າທຶນສົມທົບຂອງກະສິກອນຕົວແບບ: | |
| ວັນທີຍື່ນບົດສະເໜີຂໍທຶນ: | |

**ຊື່ ແລະ ທີ່ຢູ່ຕິດຕໍ່ຂອງກະສິກອນຕົວແບບ:**

**ຊື່: ............................................**
ໂທ: +856 20 ...........................

**ທີມງານກວດກາບົດສະເໜີຂໍທຶນຈາກໂຄງການ:**

**ທ່ານ ............................................**
ຕຳແໜ່ງ: ພະນັກງານສົ່ງເສີມເຕັກນິກການຜະລິດກະສິກຳ, ຫ້ອງການປະສານງານເມືອງ...................., ໂຄງການ ຊກຂ.
ໂທ: +856 20 ...............................

**ທ່ານ ......................................**
ຕຳແໜ່ງ: ຊ່ຽວຊານການລົງທຶນກຸ່ມຜະລິດ ແລະ ສົ່ງເສີມກະສິກຳຂັ້ນແຂວງ, ຫ້ອງການປະສານງານແຂວງ...................., ໂຄງການ ຊກຂ.
ໂທ: +856 20 ...........................

**ທ່ານ ......................................**
ຕຳແໜ່ງ: ຜູ້ຊ່ວຍທຸລະກິດກະສິກຳ, ຫ້ອງການປະສານງານແຂວງ ............................................., ໂຄງການ ຊກຂ.
ໂທ: +856 20 ...........................

**ທ່ານ ແພງເພັດ ສຸລິວົງ**
ຕຳແໜ່ງ: ຊ່ຽວຊານການລົງທຶນກຸ່ມຜະລິດ ແລະ ສົ່ງເສີມກະສິກຳຂັ້ນສູນກາງ, ຫ້ອງການປະສານງານໂຄງການສູນກາງ, ໂຄງການ ຊກຂ.
ໂທ: +856 20 96676688

**ທ່ານ ສັນຕິສຸກ ແກ້ວວິຣິຍະວົງ**
ຕຳແໜ່ງ: ຊ່ຽນຊານດ້ານທຸລະກິດກະສິກຳ, ຫ້ອງການປະສານງານໂຄງການສູນກາງ, ໂຄງການ ຊກຂ.
ໂທ: +856 20 22246436; ອີແມວ: santisouk.agribusinesspicsa@gmail.com

# ສາລະບານ

ໜ້າ


ບົດສະເໜີໂຄງການໂດຍຫຍໍ້ ....................................................................................13

I. ຂໍ້ມູນພື້ນຖານ ກ່ຽວກັບ ກະສິກອນຕົວແບບ...................................................................14

1.1 ຊື່, ທີ່ຢູ່ ແລະ ສະຖານະພາບຂອງກະສິກອນຕົວແບບ .....................................................14

1.2 ວິໄສທັດ ແລະ ເປົ້າໝາຍການພັດທະນາທຸລະກິດ .........................................................14

II. ແຜນການຜະລິດ ແລະ ປຸງແຕ່ງເພື່ອເປັນສິນຄ້າ.............................................................14

2.1 ແຜນການຜະລິດ ແລະ ປຸງແຕ່ງໄລຍະສັ້ນ.................................................................14

2.2 ແຜນການຜະລິດ ແລະ ປຸງແຕ່ງໄລຍະກາງ - ໄລຍະຍາວ ...............................................14

III. ສະພາບການຕະຫຼາດໃນປັດຈຸບັນ ແລະ ແຜນການຕະຫຼາດ..............................................15

3.1 ການວິເຄາະສະພາບດ້ານການຕະຫຼາດໃນປັດຈຸບັນ .......................................................15

3.2 ແຜນການຕະຫຼາດ ແລະ ຕະຫຼາດເປົ້າໝາຍ (ລູກຄ້າເປົ້າໝາຍ) ........................................15

IV. ແຜນການລົງທຶນ ແລະ ບໍລິຫານການເງິນ ...................................................................16

4.1 ຈຸດປະສົງຂອງການສະໝັກຂໍທຶນ ແລະ ການສົມທົບທຶນ.................................................16

4.2 ການວິເຄາະດ້ານການເງິນ.......................................................................................16

V. ຄວາມສ່ຽງ ແລະ ມາດຕະກອານປ້ອງກັນ ຫຼື ຫຼຸດຜ່ອນຄວາມສ່ຽງ.......................................18

4.1 ຄວາມສ່ຽງດ້ານການຜະລິດ ແລະ ມາດຕະການປ້ອງກັນ ຫຼື ຫຼຸດຜ່ອນ ..................................18

4.2 ຄວາມສ່ຽງດ້ານການຕະຫຼາດ ແລະ ມາດຕະການປ້ອງກັນ ຫຼື ຫຼຸດຜ່ອນ ...............................18

4.3 ຄວາມສ່ຽງດ້ານສັງຄົມ - ສິ່ງແວດລ້ອມ ແລະ ມາດຕະການປ້ອງກັນ ຫຼື ຫຼຸດຜ່ອນ ..................18

VI. ການຢັ້ງຢືນຄວາມຖືກຕ້ອງ.......................................................................................18

## ບົດສະເໜີໂຄງການໂດຍຫຍໍ້

**ຊື່ໂຄງການຂໍທຶນ**: ......................................................................................................................

**ຈຸດປະສົງຂອງການຂໍທຶນ:** ...............................................................................................................

**ລາຍລະອຽດຂອງໂຄງການ**: ...............................................................................................................

**ຊື່ກະສິກອນຕົວແບບ**: ......................................................................................................................

**ທີ່ຕັ້ງໂຄງການຂໍທຶນ**: ......................................................................................................................

**ຈຳນວນທຶນທີ່ສະເໜີຂໍຈາກໂຄງການ**: .......................... ກີບ ຫຼື ........................% ຂອງມູນຄ່າການລົງທຶນທັງໝົດ.

**ການປະກອບທຶນຂອງກະສິກອນ (25% ຂອງແຜນການລົງທຶນ)**: .................... ກີບ ຫຼື ..........% ຂອງມູນຄ່າການລົງທຶນທັງໝົດ.

**ຄາດຄະເນຜົນຕອບແທນຂອງການລົງທຶນໃນລະດັບທົວໜ່ວຍທຸລະກິດ**: .................................. ກີບ ໃນໄລຍະ 3 ປີ

## ຂໍ້ມູນພື້ນຖານ ກ່ຽວກັບ ກະສິກອນຕົວແບບ

### 1.1 ຊື່, ທີ່ຢູ່ ແລະ ສະຖານະພາບຂອງກະສິກອນຕົວແບບ

ຊື່ ແລະ ນາມສະກຸນຂອງກະສິກອນຕົວແບບ: ........................................................................................

ໃບຢັ້ງຢືນກະສິກອນຕົວແບບເລກທີ: ................................................................................................

ທີ່ຢູ່ ບ້ານ: .................................. ເມືອງ: .................................... ແຂວງ: ...................................

### 1.2 ວິໄສທັດ ແລະ ເປົ້າໝາຍການພັດທະນາທຸລະກິດ

....................................................................................................................................

....................................................................................................................................

....................................................................................................................................

## ແຜນການຜະລິດ ແລະ ປຸງແຕ່ງເພື່ອເປັນສິນຄ້າ

### ແຜນການຜະລິດ ແລະ ປຸງແຕ່ງໄລຍະສັ້ນ

....................................................................................................................................

....................................................................................................................................

....................................................................................................................................

ຕາຕະລາງທີ 1: ແຜນການຜະລິດ ແລະ ປຸງແຕ່ງເພື່ອເພີ່ມມູນຄ່າ ໄລຍະສັ້ນ

| ໄລຍະເວລາ | ກິດຈະກຳ | ວິທີການປະຕິບັດ | ຜົນໄດ້ຮັບ |
|---|---|---|---|
| | | | |
| | | | |

### ແຜນການຜະລິດ ແລະ ປຸງແຕ່ງໄລຍະກາງ - ໄລຍະຍາວ

....................................................................................................................................

....................................................................................................................................

....................................................................................................................................

ຕາຕະລາງທີ 2: ແຜນການຜະລິດ ແລະ ປຸງແຕ່ງເພື່ອເພີ່ມມູນຄ່າ ໄລຍະກາງ - ໄລຍະຍາວ

| ໄລຍະເວລາ | ກິດຈະກຳ | ວິທີການປະຕິບັດ | ຜົນໄດ້ຮັບ |
|---|---|---|---|
| | | | |
| | | | |

## ສະພາບການຕະຫຼາດໃນປັດຈຸບັນ ແລະ ແຜນການຕະຫຼາດ

### 3.1 ການວິເຄາະສະພາບດ້ານການຕະຫຼາດໃນປັດຈຸບັນ

**ຄວາມຕ້ອງການ, ການສະໜອງ ແລະ ລາຄາ**

..........................................................................................................................................

..........................................................................................................................................

..........................................................................................................................................

ຕາຕະລາງທີ 3: ຄວາມຕ້ອງການ, ການສະໜອງ ແລະ ລາຄາຜົນຜະລິດ

| ປະລິມານ ແລະ ລາຄາ | ຜົນຜະລິດທີ 1 | ຜົນຜະລິດທີ 2 | ຜົນຜະລິດທີ 3 |
|---|---|---|---|
| ຄວາມຕ້ອງການ (ໂຕນ/ປີ) | | | |
| ການສະໜອງ (ໂຕນ/ປີ) | | | |
| ລາຄາຊື້ (ກີບ/ກລ) | | | |

*ແຫຼ່ງຂໍ້ມູນ: ..........................*

**ແນວໂນ້ມຄວາມຕ້ອງການ, ການສະໜອງ ແລະ ລາຄາ**

..........................................................................................................................................

..........................................................................................................................................

..........................................................................................................................................

ຕາຕະລາງທີ 4: ຄວາມຕ້ອງການ, ການສະໜອງ ແລະ ລາຄາຜົນຜະລິດ

| ປະລິມານ ແລະ ລາຄາ | ຜົນຜະລິດທີ 1 | ຜົນຜະລິດທີ 2 | ຜົນຜະລິດທີ 3 |
|---|---|---|---|
| ຄວາມຕ້ອງການ (ໂຕນ/ປີ) | | | |
| ການສະໜອງ (ໂຕນ/ປີ) | | | |
| ລາຄາຊື້ (ກີບ/ກລ) | | | |

*ແຫຼ່ງຂໍ້ມູນ: ..........................*

### 3.2 ແຜນການຕະຫຼາດ ແລະ ຕະຫຼາດເປົ້າໝາຍ (ລູກຄ້າເປົ້າໝາຍ)

**ແຜນການຕະຫຼາດ ແລະ ລູກຄ້າເປົ້າໝາຍໄລຍະສັ້ນ:**

..........................................................................................................................................

..........................................................................................................................................

..........................................................................................................................................

**ແຜນການຕະຫຼາດ ແລະ ລູກຄ້າເປົ້າໝາຍໄລຍະກາງ - ໄລຍະຍາວ:**

.......................................................................................................................................
.......................................................................................................................................
.......................................................................................................................................

ຕາຕະລາງທີ 5: ຄາດຄະເນການຂາຍຜົນຜະລິດ

| ຊື່ຜົນຜະລິດ | ປີທີ 1 | ປີທີ 2 | ປີທີ 3 |
|---|---|---|---|
| | | | |
| | | | |
| | | | |
| ລວມມູນຄ່າການຂາຍ | | | |

## ແຜນການລົງທຶນ ແລະ ບໍລິຫານການເງິນ

### 4.1 ຈຸດປະສົງຂອງການສະໝັກຂໍທຶນ ແລະ ການສົມທົບທຶນ

.......................................................................................................................................
.......................................................................................................................................
.......................................................................................................................................

ການປະກອບທຶນເປັນເງິນສົດ ແລະ ການປະກອບທຶນເປັນວັດຖຸຂອງກະສິກອນຕົວແບບ

.......................................................................................................................................
.......................................................................................................................................

### 4.2 ການວິເຄາະດ້ານການເງິນ

.......................................................................................................................................
.......................................................................................................................................
.......................................................................................................................................

ຕາຕະລາງທີ 5: ແຜນການລົງທຶນ ແລະ ການນໍາໃຊ້ທຶນເຂົ້າໃນໂຄງການຂໍທຶນ

| ລດ | ລາຍການ | ກະສິກອນຕົວແບບ | ໂຄງການ ຊກຂ | ລວມ |
|---|---|---|---|---|
| **I** | **ທຶນຄົງທີ່** | | | |
| **1** | ການຈັດຊື້ ສໍາລັບ ລາຍການທີ່ 1 | - | - | - |
| 2 | ການຈັດຊື້ ສໍາລັບ ລາຍການທີ່ 2 | - | - | - |
| 3 | ການຈັດຊື້ ສໍາລັບ ລາຍການທີ່ 3 | - | - | - |
| 4 | ການຈັດຊື້ ສໍາລັບ ລາຍການທີ່ 4 | - | - | - |
| | **ລວມມູນຄ່າຊັບສິນຄົງທີ່** | - | - | - |
| **II** | **ທຶນໝູນວຽນ** | | | |
| 1 | | | | - |
| 2 | | | | - |
| 3 | | | | - |
| 4 | | | | - |
| 5 | | | | - |
| | **ລວມມູນຄ່າທຶນໝູນວຽນ** | - | - | - |
| **I+II** | **ລວມມູນຄ່າການລົງທຶນ** | - | - | - |
| | **ການປະກອບທຶນ (%)** | **#DIV/0!** | **#DIV/0!** | **#DIV/0!** |

## ຄາດຄະເນກະແສເງິນສົດ ໄລຍະ 3 ປີ (2024 -2026)

| ລດ | ລາຍການ | ປີທີ 1 | ປີທີ 2 | ປີທີ 3 |
|---|---|---|---|---|
| **I** | **ລາຍຮັບ** | | | |
| 1 | ລວມມູນຄ່າການຂາຍຜົນຜະລິດ | - | - | - |
| | **ລວມລາຍຮັບ** | - | - | - |
| **II** | **ລາຍຈ່າຍ** | | | |
| | ຊັບສິນຄົງທີ່ | - | | |
| 1 | | | | |
| 2 | | | | |
| 3 | | | | |
| 4 | | | | |
| | ທຶນໝູນວຽນ | | | |
| 1 | | | | |
| 2 | | | | |
| | **ລວມລາຍຈ່າຍ** | - | - | - |
| **I - II** | **ຜົນໄດ້ຮັບຂອງການລົງທຶນ** | - | - | - |

## ຕາຕະລາງທີ 7: ໃບດຸ່ນດ່ຽງທາງການເງິນ ໄລຍະ 3 ປີ (2024 -2026)

| ລດ | ລາຍການ | ປີທີ 1 | ປີທີ 2 | ປີທີ 3 |
|---|---|---|---|---|
| **I** | **ຊັບສິນ** | | | |
| 1 | **ຊັບສິນຄົງທີ່** | | | |
| | - | - | - | - |
| | - | - | - | - |
| | - | - | - | - |
| | - | - | - | - |
| | **ລວມມູນຄ່າລົງທຶນໃນຊັບສິນຄົງທີ່** | - | - | - |
| **2** | **ຊັບສິນໝູນວຽນ** | | | |
| | ທຶນໝູນວຽນ | - | - | - |
| | **ລວມມູນຄ່າຊັບສິນໝູນວຽນ** | - | - | - |
| **II** | **ໜີ້ສິນ/ລາຍຈ່າຍປະຈໍາປີ** | | | |
| | ກໍາໄລຈາກການຂາຍ | - | - | - |
| | ລາຍຈ່າຍປະຈໍາປີ | - | - | - |
| | **ລວມລາຍຈ່າຍປະຈໍາປີ** | - | - | - |
| **ລວມມູນຄ່າຊັບສິນທັງໝົດ** | | - | - | - |
| **ລວມມູນຄ່າໜີ້ສິນ/ລາຍຈ່າຍປະຈໍາປີ** | | - | - | - |

## ຄວາມສ່ຽງ ແລະ ມາດຕະການປ້ອງກັນ ຫຼື ຫຼຸດຜ່ອນຄວາມສ່ຽງ

### 4.1 ຄວາມສ່ຽງດ້ານການຜະລິດ ແລະ ມາດຕະການປ້ອງກັນ ຫຼື ຫຼຸດຜ່ອນ

| ລ/ດ | ຄວາມສ່ຽງ | ມາດຕະການປ້ອງກັນ ຫຼື ຫຼຸດຜ່ອນ |
|---|---|---|
| | | |
| | | |

### 4.2 ຄວາມສ່ຽງດ້ານການຕະຫຼາດ ແລະ ມາດຕະການປ້ອງກັນ ຫຼື ຫຼຸດຜ່ອນ

| ລ/ດ | ຄວາມສ່ຽງ | ມາດຕະການປ້ອງກັນ ຫຼື ຫຼຸດຜ່ອນ |
|---|---|---|
| | | |
| | | |

### 4.3 ຄວາມສ່ຽງດ້ານສັງຄົມ - ສິ່ງແວດລ້ອມ ແລະ ມາດຕະການປ້ອງກັນ ຫຼື ຫຼຸດຜ່ອນ

| ລ/ດ | ຄວາມສ່ຽງ | ມາດຕະການປ້ອງກັນ ຫຼື ຫຼຸດຜ່ອນ |
|---|---|---|
| | | |
| | | |

## ການຢັ້ງຢືນຄວາມຖືກຕ້ອງ

ຂ້າພະເຈົ້າຂໍຢັ້ງຢືນວ່າຂ້າພະເຈົ້າມີຄວາມຮັບຜິດຊອບໂດຍກົງຕໍ່ຂໍ້ມູນ ແລະ ບົດສະເໜີຂໍທຶນນີ້. ຂ້າພະເຈົ້າຂໍປະຕິຍານວ່າຈະນຳໃຊ້ທຸກພະຍາຍາມ ແລະ ຄວາມສາມາດເພື່ອຈັດຕັ້ງປະຕິບັດໂຄງການທີ່ສະເໜີຂໍທຶນນີ້ໃຫ້ມີປະສິດທິພາບ ແລະ ປະສົບຜົນສຳເລັດຕາມແຜນການ.

| ຜູ້ສະໝັກຂໍທຶນ (ກະສິກອນຕົວແບບ) | ລາຍເຊັນ ແລະ ປະທັບຕາ |
|---|---|
| ຊື່ ແລະ ນາມສະກຸນ: ..........................................................<br>ທີ່ຢູ່ (ບ້ານ): ......................................................................<br>ເບີໂທລະສັບ: .................................................................... | ...................................................... |

| ຢັ້ງຢືນໂດຍຄະນະບໍລິຫານກຸ່ມ | ລາຍເຊັນ ແລະ ປະທັບຕາ |
|---|---|
| ຊື່ ແລະ ນາມສະກຸນ: .......................................................... | |

| | |
|---|---|
| ຕຳແໜ່ງ: .......................................................................... <br> ເບີໂທລະສັບ: ................................................................... | ...................................................... |

| ຢັ້ງຢືນໂດຍອຳນາດການປົກຄອງບ້ານ | ລາຍເຊັນ ແລະ ປະທັບຕາ |
|---|---|
| ຊື່ ແລະ ນາມສະກຸນ: .......................................................... <br> ຕຳແໜ່ງ: .......................................................................... <br> ເບີໂທລະສັບ: ................................................................... | ...................................................... |

| ຢັ້ງຢືນໂດຍຫ້ອງການປະສານງານໂຄງການຂັ້ນເມືອງ | ລາຍເຊັນ ແລະ ປະທັບຕາ |
|---|---|
| ຊື່ ແລະ ນາມສະກຸນ: .......................................................... <br> ຕຳແໜ່ງ: .......................................................................... <br> ເບີໂທລະສັບ: ................................................................... | ...................................................... |

| ຢັ້ງຢືນໂດຍຫ້ອງການກະສິກຳ ແລະ ປ່າໄມ້ | ລາຍເຊັນ ແລະ ປະທັບຕາ |
|---|---|
| ຊື່ ແລະ ນາມສະກຸນ: .......................................................... <br> ຕຳແໜ່ງ: .......................................................................... <br> ເບີໂທລະສັບ: .................................................................. | ...................................................... |

| ຢັ້ງຢືນໂດຍຫ້ອງການປະສານງານໂຄງການຂັ້ນແຂວງ | ລາຍເຊັນ ແລະ ປະທັບຕາ |
|---|---|
| ຊື່ ແລະ ນາມສະກຸນ: ..........................................................<br>ຕຳແໜ່ງ: ..........................................................................<br>ເບີໂທລະສັບ: .................................................................... | ...................................................... |

| ຢັ້ງຢືນໂດຍຫ້ອງພະແນກກະສິກຳ ແລະ ປ່າໄມ້ | ລາຍເຊັນ ແລະ ປະທັບຕາ |
|---|---|
| ຊື່ ແລະ ນາມສະກຸນ: ..........................................................<br>ຕຳແໜ່ງ: ..........................................................................<br>ເບີໂທລະສັບ: .................................................................... | ...................................................... |

ບົດສະເໜີຂໍທຶນສົມທົບເພື່ອພັດທະນາທຸລະກິດ ສຳລັບ ກະສິກອນຕົວແບບ ໄດ້ຂຽນຂຶ້ນບົນພື້ນຖານແນວຄວາມຄິດ ແລະ ເປົ້າໝາຍການພັດທະນາຂອງກະສິກອນຕົວແບບ, ພາຍໃຕ້ການອຳນວຍຄວາມສະດວກ ແລະ ສະໜັບສະໜູນຈາກທີມງານຊ່ຽວຊານປະຈຳຫ້ອງການປະສານງານໂຄງການ ຊກຂ ຂັ້ນເມືອງ, ຫ້ອງການປະສານງານຂັ້ນແຂວງ ແລະ ຂັ້ນສູນກາງ. ເອກະສານດັ່ງກ່າວແມ່ນໄດ້ຜ່ານຂະບວນການກວດກາຄວາມຄົບຖ້ວນ ແລະ ຖືກຕ້ອງ ເພື່ອຍືນຂໍທຶນນຳໂຄງການ ຊກຂ.

## ແບບຟອມທີ 2: ບົດບັນທຶກກອງປະຊຸມ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງ .............

ບ້ານ ..............

# ບົດບັນທຶກ

## ກອງປະຊຸມ ກ່ຽວກັບ ການຄັດເລືອກຕົວແບບຊາວກະສິກອນ ແລະ ຊາວໜຸ່ມຕົວແບບຂອງກຸ່ມຜະລິດ

ກອງປະຊຸມກ່ຽວກັບການຄັດເລືອກຕົວແບບຊາວກະສິກອນ ແລະ ຊາວໜຸ່ມຕົວແບບຂອງກຸ່ມຜະລິດ ໄດ້ຈັດຂຶ້ນໃນວັນທີ.................ເປັນເວລາ.......ວັນ, ຢູ່ທີ່......................ພາຍໃຕ້ການເປັນປະທານຂອງທ່ານ..................... ແລະ ມີຜູ້ເຂົ້າຮ່ວມທັງໝົດຈຳນວນ.......... ຄົນ, ຍິງ........ຄົນ (ບັນຊີລາຍຊື່ຄັດຄືດມາພ້ອມນີ້). ຜ່ານການດຳເນີນກອງປະຊຸມປຶກສາຫາລື ແລະ ປະກອບຄຳເຫັນ ແມ່ນໄດ້ຕົກລົງເຫັນດີເປັນເອກະພາບກັນ ດັ່ງໃນເນື້ອໃນຂ້າງລຸ່ມນີ້:

1. ຈຸດປະສົງໃນການປະຊຸມ:..........................................................................................
   ...........................................................................................................
   ...........................................................................................................
   ...........................................................................................................
2. ຜົນໄດ້ຮັບຂອງກອງປະຊຸມ:
   ...........................................................................................................
   ...........................................................................................................
   ...........................................................................................................
3. ແຜນການເຄື່ອນໄຫວໃນຕໍ່ໜ້າ: .........................................................................
   ...........................................................................................................
   ...........................................................................................................
4. ປຶກສາຫາລືວຽກງານອື່ນໆ (ຖ້າມີ) ..................................................................

ດັ່ງນັ້ນ, ຈຶ່ງເຮັດບົດບັນທຶກສະບັບນີ້ ໄວ້ເປັນຫຼັກຖານ.

ທີ່...................., ວັນທີ ....................

**ປະທານກອງປະຊຸມ** **ຜູ້ບັນທຶກ**

# ແບບຟອມທີ 3: ແບບຟອມການເກັບກຳຂໍ້ມູນ ແລະ ປະເມີນສະມາຊິກກຸ່ມຜະລິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງ..................

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ

## ແບບຟອມການເກັບກຳຂໍ້ມູນ ແລະ ປະເມີນສະມາຊິກກຸ່ມຜະລິດ

### ຂໍ້ມູນທົ່ວໄປ

1. ແຂວງ____________________________
2. ເມືອງ____________________________
3. ບ້ານ____________________________
4. ໜ່ວຍ ☐
5. ເຮືອນເລກທີ ☐
6. ຊື່ ແລະ ນາມສະກຸນຫົວໜ້າຄອບຄົວ____________________ ☐ ຊາຍ ☐ ຍິງ
   ເບີໂທລະສັບ:____________________________
7. ເກັບກຳຂໍ້ມູນ

| ວັນທີ | | ເດືອນ | | ປີ | | | |
|---|---|---|---|---|---|---|---|
| | | | | | | | |

8. ຊື່ ແລະ ນາມສະກຸນຜູ້ເກັບກຳຂໍ້ມູນ________________________
   ເບີໂທລະສັບ__________________________

| ລາຍເຊັນຜູ້ເກັບກຳຂໍ້ມູນ |
|---|
| |

ຊື່ ແລະ ນາມສະກຸນຜູ້ສະໜອງຂໍ້ມູນ________________________
ເບີໂທລະສັບ__________________________

| ລາຍເຊັນຜູ້ສະໜອງກຳຂໍ້ມູນ |
|---|
| |

9. ເກັບກຳຂໍ້ມູນ

| ວັນທີ | | ເດືອນ | | ປີ | | | |
|---|---|---|---|---|---|---|---|
| | | | | | | | |

10. ຊື່ ແລະ ນາມສະກຸນ ຜູ້ກວດກາຂໍ້ມູນ________________________
    ເບີໂທລະສັບ____________________________

| ລາຍເຊັນຜູ້ກວດກາກຳຂໍ້ມູນ |
|---|
| |

## ເງື່ອນໄຂ ແລະ ມາດຖານຄອບຄົວຕົວແບບ ແລະ ຊາວໜຸ່ມຕົວແບບ

ການຄັດເລືອກຄົວເຮືອນຊາວກະສິກອນຕົວແບບ ແລະ ຊາວກະສິກອນໄວໜຸ່ມຕົວແບບ ໂດຍການຄົ້ນຄວ້າ ພິຈາລະນາຕາມມາດ ຖານ-ເງື່ອນໄຂ ທີ່ມີຄວາມເໝາະສົມ, ຄົວເຮືອນດັ່ງກ່າວຖືກຕ້ອງຕາມມາດຖານ-ເງື່ອນໄຂ ແມ່ນໃຫ້ຄະແນນດ້ວຍການໝາຍຕິກ(√)ໃສ່ຫ້ອງ(ຜ່ານ), ແຕ່ຖ້າບໍ່ຖືກກັບມາດຖານ-ເງື່ອນໄຂແມ່ນໃຫ້ຄະແນນ ໝາຍຕິກ(√) ໃສ່ຫ້ງ(ບໍ່ຜ່ານ).

| ລດ | ເງື່ອນໄຂ | ຜ່ານ | ບໍ່ຜ່ານ |
|---|---|---|---|
| 1 | ເປັນຄົວເຮືອນຊາວໜຸ່ມ ທີ່ມີອາຍຸ 15-35 ປີ ທີ່ມີທີ່ຢູ່ຖາວອນໃນບ້ານເປົ້າໝາຍ ແລະ ມີຄວາມປາດຖະໜາ ສ້າງ ແລະ ປັງປຸງຊີວິດການເປັນຢູ່ທີ່ຍຶດອາຊີບເປັນຊາວກະສິກອນໃນບ້ານ. | | |
| 2 | ເປັນຜູ້ທີ່ມີຄຸນສົມບັດດີເປັນແບບຢ່າງຮອບດ້ານ ແລະ ຄົວເຮືອນມີຄວາມສະຫງົບສຸກ. | | |
| 3 | ເປັນຜູ້ທີ່ມີຄວາມສາມັກຄີ ແລະ ສາມາດເຕົ້າໂຮມຄວາມສາມັກຄີພາຍໃນກຸ່ມໄດ້ດີ. | | |
| 4 | ເປັນເພດຍິງ ແມ່ນສະໜັບສະໜູນເປັນບຸລິມະສິດ | | |
| 5 | ມີຄວາມສຳເລັດໃນການປະຕິບັດກິດຈະກຳ ແລະ ມີລາຍຮັບຈາກການຜະລິດຫລາຍກວ່າ 5.6-7.2 ລ້ານກີບ/ປີຂຶ້ນໄປ. | | |
| 6 | ເປັນຜູ້ທີ່ມີຄວາມຮູ້, ຄວາມສາມາດທາງດ້ານເຕັກນິກກະສິກຳທີ່ແໜ້ນໜາ ສາມາດຖ່າຍທອດ, ແນະນຳ ແລະ ສິດສອນໃຫ້ແກ່ກຸ່ມຊາວກະສິກອນຂອງໂຄງການ. | | |
| | **ຄະແນນລວມ** | | |

**ໝາຍເຫດ:** ຄົວເຮືອນທີ່ຄັດເລືອກເປັນຊາວກະສິກອນຕົວແບບ ແລະ ຊາວກະສິກອນໄວໜຸ່ມຕົວແບບຕ້ອງຜ່ານ 3 ມາດຖານ-ເງື່ອນໄຂ ຂຶ້ນໄປ.

## ແບບຟອມທີ 4 : ບົດລາຍງານການປະເມີນສະມະຊິກ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງ .............
ບ້ານ ..............

# ບົດລາຍງານການປະເມີນສະມາຊິກ

ການປະເມີນການຈັດຕັ້ງປະຕິບັດໂຄງການຂອງສະມາຊິກກຸ່ມຜະລິດ...............................ບ້ານ .....................................ເມືອງ..............................ແຂວງ..................................ເຊິ່ງໄດ້ມີປະເມີນ ໃນລະຫວ່າງວັນທີ.......................ຫາ.........................ຈຳນວນຄອບຄົວສະມາຊິກທີ່ໄດ້ປະເມີນມີ ..............ຄຄ, ຍິງ............ຄົນ, ໂດຍມີຜູ້ເຂົ້າຮ່ວມຈຳນວນ........................ຄົນ, ຍິງ................ຄົນ.

1. ທ່ານ...........................ໜ້າທີ່ຮັບຜິດຊອບ.................................ລາຍເຊັນ..........................
2. ທ່ານ...........................ໜ້າທີ່ຮັບຜິດຊອບ.................................ລາຍເຊັນ..........................
3. ທ່ານ...........................ໜ້າທີ່ຮັບຜິດຊອບ.................................ລາຍເຊັນ..........................
4. ທ່ານ...........................ໜ້າທີ່ຮັບຜິດຊອບ.................................ລາຍເຊັນ..........................
5. ທ່ານ...........................ໜ້າທີ່ຮັບຜິດຊອບ.................................ລາຍເຊັນ..........................

ຜ່ານການປະເມີນແຕ່ລະຄອບຄົວແລ້ວສາມາດສັງລວມຜົນໄດ້ຮັບໃນການປະເມີນຄື:
ຈຳນວນຄອບຄົວທີ່ໄດ້ຜ່ານມາດຖານການປະເມີນ ທີ່ສາມາດຄັດເລືອກເປັນຕົວແບບໄດ້ປະກອບມີຈຳນວນ .......... ຄອບຄົວ ໃນນັ້ນມີຄອບຄົວຕົບແບບ.......ຄຄ, ຄອບຄົວຊາວໜຸ່ມຕົວແບບ ........ຄຄ, ຄອບຄົວທີ່ມີແມ່ຍິງເປັນຫົວໜ້າຄອບຄົວ.................ຄຄ, ເຊິ່ງມີລາຍຊື່ລະອຽດຄື:

1. ທ່ານ.............................................
2. ທ່ານ.............................................
3. ທ່ານ.............................................

ຈຳນວນ........ຄຄ, ເປັນຄອບຄົວທີ່ຍັງຈະໄດ້ມີການປັບປຸງ ແລະ ສືບຕໍ່ໃນການຈັດຕັ້ງປະຕິບັດ ໂດຍສະເພາະທາງດ້ານເຕັກນິກ, ປະລິມານ ແລະ ຄຸນະພາບໃນການຜະລິດ ເຊິ່ງຈະໄດ້ມີການຖອດຖອນບົດຮຽນຈາກຈຳນວນຄອບຄົວທີ່ຜ່ານມາດຖານ ແລະ ພົ້ນເດັ່ນໃນການຈັດຕັ້ງປະຕິບກິດຈະກຳ ແລະ ພ້ອມດຽວກັນນັ້ນປະຊາຊົນໝົດບ້ານ ແລະ ຈຳນວນສະມາຊິກທັງໝົດ ກໍ່ໄດ້ມີການປຶກສາຫາລື, ຄົ້ນຄວ້າ ແລະ ຮັບຮອງເອົາຄອບຄົວຕົວແບບ ແລະ ຊາວໜຸ່ມຕົວແບບມີລາຍລະອຽດຄື:

1. ທ່ານ.............................................
2. ທ່ານ............................................

ເພື່ອເປັນຕົວແບບທາງດ້ານການຜະລິດກະສິກຳ ໃຫ້ແກ່ສະມາຊິກກຸ່ມ ແລະ ຊຸມຊົນພາຍໃນບ້ານ ໃນການຜະລິດໃຫ້ກາຍເປັນສິນຄ້າ ແລະ ການຕະຫລາດ ພາຍໃນກຸ່ມ ແລະ ບ້ານ ໃນຕໍ່ໜ້າ.

ທີ່..................................ວັນທີ.......................................

ຢັ້ງຢືນໂດຍ.......................                                        ຜູ້ລາຍງານ

## ແບບຟອມທີ 5: ໃບຄຳຮ້ອງຂອງກຸ່ມເພື່ອສ້າງຕົວແບບ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງ .......................

ບ້ານ .........................

ກຸ່ມຜະລິດ

### ໃບຄຳຮ້ອງ

**ຮຽນ**: ທ່ານ ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.............................................

(ໂດຍຜ່ານ ທ່ານ ນາຍບ້ານໆ ........................................)

**ເລື່ອງ:** ສະເໜີຂໍອະນຸມັດຄອບຄົວຕົວແບບ.

- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການມາດຖານຄອບຄົວກະສິກຳ ແລະ ປ່າໄມ້ ຕົວແບບ ແລະ ບ້ານແບບຢ່າງດ້ານກະສິກຳ ແລະ ປ່າໄມ້ ແລະ ເມືອງກະສິກຳ ແລະ ປ່າໄມ້ພັດທະນາ, ເລກທີ 0837/ກປ,ລົງວັນທີ 6/4/2018
- ອີງໃສ່ລະບຽບຫລັກການ, ນະໂຍບາຍ ແລະ ແຜນວຽກ ແລະ ແຜນງົບປະມານ ປະຈຳປີ ໃນການຈັດຕັ້ງປະຕິບັດໂຄງການ ຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ).
- ອີງຕາມ ບົດບັນທຶກກອງປະຊຸມຂອງກຸ່ມໃນການຄັດເລືອກຕົວແບບ ແລະ ຊາວໜຸ່ມຕົວແບບ, ສະບັບລົງວັນທີ ...........

ຂ້າພະເຈົ້າທ້າວ/ນາງ...........................ຫົວໜ້າກຸ່ມຜະລິດ, ຢູ່ບ້ານ:..................,ເມືອງ:........ແຂວງ ............. ໃນນາມຄະນະບໍລິຫານກຸ່ມການຜະລິດ ຂໍຖືເປັນກຽດຮຽນສະເໜີມາຍັງທ່ານ ເພື່ອອະນຸມັດອອກຂໍ້ຕົກລົງຮັບຮອງ ແລະ ອະນຸຍາດໃນການສ້າງຕົວແບບ ແລະ ຊາວໜຸ່ມຕົວແບບຂອງກຸ່ມຜະລິດ, ເຊິ່ງມີລາຍຊື່ ລະອຽດລຸ່ມນີ້:

1. ທ່ານ/ນາງ ................................ຄອບຄົວຕົວແບບ
2. ທ່ານ/ນາງ.................................ຊາວໜຸ່ມຕົວແບບ

ຈຸດປະສົງຂອງຕົວແບບ

- ເພື່ອສະໜັບສະໜູນຊາວກະສິກອນຕົວແບບສ້າງຕັ້ງ, ຜັນຂະຫຍາຍຫົວໜ່ວຍການຜະລິດໂດຍການນຳໃຊ້ເທັກໂນໂລຊີທີ່ແທັກເໝາະ ແລະ ໄດ້ຮັບຜົນສຳເລັດມາແລ້ວເພື່ອນຳໄປດຳເນີນການສາທິດ ແລະ ແລກປ່ຽນບົດຮຽນ, ຄວາມຮູ້ກັບກຸ່ມອື່ນໆທີ່ກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາຕາມທາງຄວນດ້ວຍ.

ທີ່...................,ວັນທີ ................

**ຢັ້ງຢືນໂດຍ: ນາຍບ້ານໆ .............**

**ຫົວໜ້າກຸ່ມການຜະລິດ**

**ແບບຟອມທີ 6: ໃບສະເໜີຫາ ທ່ານເຈົ້າເມືອງ ເພື່ອອອກໃບຢັ້ງຢືນຕົວແບບ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງ.........................

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເລກທີ: .............. /ຫກ.ປມ

ທີ່: .................., ວັນທີ: ................

# ໃບສະເໜີ

**ຮຽນ**: ທ່ານ ເຈົ້າເມືອງ ..............................................

**ເລື່ອງ**: ສະເໜີຂໍອະນຸມັດ ສ້າງຕົວແບບ ແລະ ຊາວໜຸ່ມຕົວແບບ

- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການມາດຖານຄອບຄົວກະສິກຳ ແລະ ປ່າໄມ້ຕົວແບບ ແລະ ບ້ານແບບຢ່າງດ້ານກະສິກຳ ແລະ ປ່າໄມ້ ແລະ ເມືອງກະສິກຳ ແລະ ປ່າໄມ້ພັດທະນາ, ເລກທີ 0837/ກປ,ລົງວັນທີ 6/4/2018
- ອີງໃສ່ລະບຽບຫລັກການ, ນະໂຍບາຍ ແລະ ແຜນວຽກ ແລະ ແຜນງົບປະມານປະຈຳປີ ໃນການຈັດຕັ້ງປະຕິບັດໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ).
- ອີງຕາມໃບສະເໜີຂອງຄະນະບໍລິຫານງານກຸ່ມຜະລິດກະສິກຳ, ສະບັບເລກທີ........, ລົງວັນທີ......................

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຂໍຖືເປັນກຽດຮຽນສະເໜີມາຍັງທ່ານ ເພື່ອຂໍອະນຸມັດສ້າງຕົວແບບ ແລະ ຊາວໜຸ່ມຕົວແບບຂອງກຸ່ມຜະລິດ, ບ້ານ..................ເມືອງ...............ແຂວງ..................., ເຊິ່ງປະກອບມີ 2 ທ່ານຄື:

1. ທ່ານ/ນາງ .................................ຄອບຄົວຕົວແບບ
2. ທ່ານ/ນາງ..................................ຊາວໜຸ່ມຕົວແບບ

ຈຸດປະສົງ: ເພື່ອສະໜັບສະໜູນຊາວກະສິກອນຕົວແບບສ້າງຕັ້ງ, ຜັນຂະຫຍາຍຫົວໜ່ວຍການຜະລິດໂດຍການນຳໃຊ້ເຕັກໂນໂລຊີທີ່ເໝາະສົມ ແລະ ໄດ້ຮັບຜົນສຳເລັດມາແລ້ວເພື່ອນຳໄປດຳເນີນການສາທິດ ແລະ ແລກປ່ຽນບົດຮຽນ, ຄວາມຮູ້ກັບກຸ່ມອື່ນໆທີ່ກ່ຽວຂ້ອງ..

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາຕາມທາງຄວນດ້ວຍ.

**ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ເມືອງ**

<u>ສຳເນົາສົ່ງ:</u>

- ໂຄງການ ຊກຂ - 02 ສະບັບ
- ເກັບຮັກສາໄວ້ - 01 ສະບັບ

**ແບບຟອມທີ 7: ຂໍ້ຕົກລົງຂອງທ່ານເຈົ້າເມືອງ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງ .............................                                                   ເລກທີ: ............/ .......

ທີ່ ..................., ວັນທີ..................

**ຂໍ້ຕົກລົງ**

**ວ່າດ້ວຍ ການຮັບຮອງເອົາຄອບຄົວຕົວແບບ ແລະ ຊາວໜຸ່ມຕົວແບບ**

- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການມາດຖານຄອບຄົວກະສິກຳ ແລະ ປ່າໄມ້ ຕົວແບບ ແລະ ບ້ານແບບຢ່າງດ້ານກະສິກຳ ແລະ ປ່າໄມ້ ແລະ ເມືອງກະສິກຳ ແລະ ປ່າໄມ້ພັດທະນາ, ເລກທີ 0837/ກປ,ລົງວັນທີ 6/4/2018

- ອີງຕາມ ໃບສະເໜີຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ສະບັບລົງວັນທີ .............

**ທ່ານເຈົ້າເມືອງ ອອກຂໍ້ຕົກລົງ:**

ມາດຕາ 01: ເຫັນດີຮັບຮອງ ເອົາຜົນການຄັດເລືອກຕົວແບບ ແລະ ຊາວໜຸ່ມຕົວແບບຂອງກຸ່ມຜູ້ຜະລິດ.....................ທີ່ ສະມາຊິກກຸ່ມ ແລະ ຊຸມຊົນໄດ້ເຫັນດີເປັນເອກະພາບຮັບຮອງເອົາຢູ່ໃນກອງປະຊຸມ.

ມາດຕາ 02: ເຫັນດີຮັບຮອງ ເອົາການແຕ່ງຕັ້ງຄອບຄົວຕົວແບບ ແລະ ຊາວໜຸ່ມຕົວແບບ, ດັ່ງໃນລາຍລະອຽດຂ້າງລຸ່ມນີ້:

1. ທ່ານ/ນາງ .................................ຄອບຄົວຕົວແບບ
2. ທ່ານ/ນາງ..................................ຊາວໜຸ່ມຕົວແບບ

ມາດຕາ 03: ອຳນາດການປົກຄອງທຸກຂັ້ນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືກັບຕົວແບບ ແລະ ຊາວໜຸ່ມຕົວແບບໃນ ການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ 04: ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້າເມືອງ**

<u>ສຳເນົາສົ່ງ</u>:

- ຫ້ອງການປະສານງານໂຄງການ ຊກຂ 01 ສະບັບ
- ກຸ່ມການຜະລິດບ້ານ 01 ສະບັບ
- ເກັບຮັກສາໄວ້ 01 ສະບັບ
-

## ແບບຟອມທີ 8: ໃບຢັ້ງຢືນຊາວກະສິກອນຕົວແບບ/ຊາວໜຸ່ມຕົວແບບ ທີ່ອະນຸມັດໂດຍທ່ານເຈົ້າເມືອງ



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ.....................

ເມືອງ.....................

ເລກທີ............../

# ໃບຢັ້ງຢືນ

## ຄອບຄົວຕົວແບບ ດ້ານກະສິກຳ

ເຈົ້າເມືອງໆ:.........................................................

ຢັ້ງຢືນວ່າ ຄອບຄົວ.................................................ບ້ານ.........................................

ໄດ້ຮັບຮອງເປັນຄອບຄົວຕົວແບບດ້ານກະສິກຳປະຈຳປີ.........................................................

ເມືອງ..............................ວັນທີ.........ເດືອນ.........ປີ...........

ຂໍ້ຕົກລົງເລກທີ.............../

ລົງວັນທີ......................

ເຈົ້າເມືອງ

**ເອກະສານອ້າງອີງ**


1. ອີງຕາຂໍ້ຕົກລົງຂອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍ ມາດຕະຖານຄອບຄົວກະສິກຳ ແລະ ປ່າໄມ້ຕົວແບບ , ບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ແລະ ເມືອງກະສິກຳ ແລະ ປ່າໄມ້ພັດທະນາ, ເລກທີ 0837/ກປ , ລົງວັນທີ 16/4/18.
2. ກົມຊົນລະປະທານ, ໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ), ຄູ່ມືການລົງທຶນກຸ່ມການຜະລິດຊາວກະສິກອນ.